# ພາບລວມໂຄງການບັດຜ່ານຂຶ້ນລົດເມ RIPTA ສໍາລັບຜູ້ອາວຸໂສ ແລະຄົນພິການ

RHODE ISLAND PUBLIC TRANSIT AUTHORITY

**ຫຼັກຖານຢັ້ງຢືນອາຍຸ**

**ໜຶ່ງ**ໃນຫຼັກຖານຢັ້ງຢືນອາຍຸແມ່ນຕ້ອງໄດ້ແຈ້ງດັ່ງຕໍ່ໄປນີ້ຄື:

1. ບັດ Medicare Card
2. ໃບຢັ້ງຢືນການເກີດ
3. ໃບຂັບຂີ່
4. ບັດປະຈໍາຕົວຂອງລັດ
5. ໜັງສືຜ່ານແດນ
6. ບັດຂຽວ ຫຼືເອກະສານຢັ້ງຢືນການເປັນພົນລະເມືອງ

**ການຢັ້ງຢືນຄວາມພິການ**

**ໜຶ່ງ**ໃນຫຼັກຖານຕໍ່ໄປນີ້ແມ່ນຕ້ອງໄດ້ແຈ້ງເປັນການຢັ້ງຢືນຄວາມພິການຄື:

1. ບັດ Medicare Card
2. ໜັງສືຄຸ້ມຄອງນັກຮົບເກົ່າທີ່ມີການຈັດອັນດັບຄວາມພິການຢູ່ທີ່ ຫຼືເກີນ 70%
3. ໜັງສືຈາກນາຍຈ້າງ ຫຼືຜູ້ໃຫ້ບໍລິການປະກັນໄພຄວາມພິການຂອງນາຍຈ້າງທີ່ມີການຈັດອັນດັບຄວາມພິການຢູ່ທີ່ ຫຼືເກີນ 70%
4. ໜັງສືປະຈຸບັນ (ພາຍໃນປີທີ່ແລ້ວ) ຈາກປະກັນສັງຄົມສະແດງໃຫ້ເຫັນວ່າ ບຸກຄົນຍັງໄດ້ຮັບຜົນປະໂຫຍດທີ່ເປັນປະກັນໄພຄວາມພິການປະກັນສັງຄົມ (SSDI) ຫຼືລາຍຮັບປະກັນສັງຄົມ (SSI) ຢູ່ຕາມພື້ນຖານຄວາມພິການ. ໜັງສືສາມາດເປັນໜັງສືໃຫ້ຄວາມພິການປະກັນສັງຄົມໃນເບື້ອງຕົ້ນ, ໜັງສືຢັ້ງຢືນຜົນປະໂຫຍດ, ຫຼືຄ່າໃຊ້ຈ່າຍ SSI ວ່າດ້ວຍການແຈ້ງການປັບປຸງການດໍາລົງຊີວິດ.

ການຢັ້ງຢືນຄວາມພິການ: **ຕົວເຂັ້ມ**=SSDI **ຫຼື** SSI **ແມ່ນຍອມຮັບໄດ້** ຕົວອຽງ=*SSDI* ຫຼື *SSI* ແມ່ນບໍ່ຍອມຮັບໄດ້

| **ປະກັນໄພຄວາມພິການປະກັນສັງຄົມ (SSDI)** | **ລາຍໄດ້ປະກັນສັງຄົມເສີມ (SSI)** |
|---|---|
| • ຜົນປະໂຫຍດຄວາມພິການຈະຕ້ອງຈ່າຍໃຫ້ກັບ:<br>○ **ພະນັກງານຕາບອດ ຫຼືພິການ**<br>○ *ເດັກນ້ອຍຂອງເຂົາເຈົ້າທີ່ມີອາຍຸ 18 ປີ ຫຼືອາຍຸ 18-19 ປີ ທີ່ຍັງຮຽນຢູ່ໃນໂຮງຮຽນ (ຜົນປະໂຫຍດນັກຮຽນ)*<br>○ **ເດັກນ້ອຍອາຍຸເກີນ 18 ປີ, ຖ້າເປັນຄົນພິການ**<br>○ *ຄູ່ສົມລົດທີ່ມີຊີວິດລອດພ້ອມທັງມີເດັກນ້ອຍອາໄສຢູ່ນໍາ*<br>○ **ຄູ່ສົມລົດມີຊີວິດລອດທີ່ພິການ**<br>○ **ຜູ້ໃຫຍ່ພິການມາແຕ່ຕອນເປັນເດັກ** | • ຜົນປະໂຫຍດ SSI ຈະຕ້ອງຈ່າຍໃຫ້ກັບ:<br>○ *ບຸກຄົນທີ່ມີອາຍຸ 65 ປີຂຶ້ນໄປ**<br>○ **ຜູ້ໃຫຍ່ທີ່ພິການ ຫຼືຕາບອດ**<br>○ **ເດັກນ້ອຍທີ່ພິການ ຫຼືຕາບອດ**<br>*ບຸກຄົນອາຍຸ 65+ ປີ ມີສິດໄດ້ຮັບບັດຜ່ານຂຶ້ນລົດເມອີງຕາມອາຍຸ |

5. ໜັງສືຈາກອົງການຮັບຮອງທີ່ຢັ້ງຢືນວ່າ ທ່ານມີຄວາມພິການແທ້. ໃນປະຈຸບັນນີ້, ອົງການຕໍ່ໄປນີ້ໄດ້ຮັບອະນຸຍາດໃຫ້ອອກໜັງສືແກ່ RIPTA. ອົງການອື່ນໆທີ່ອາດຈະສົນໃຈໃນການອອກໜັງສືຢັ້ງຢືນຈະໄດ້ຮັບການພິຈາລະນາ.

- ສໍານັກງານບໍລິການຟື້ນຟູ (ORS)
- ສູນການແພດ VA
- Crossroads RI
- ພັນທະມິດດູແລຊຸມຊົນ
- ສູນ The Providence Center
- ອຸດສາຫະກໍາ Goodwill ຂອງ RI
- ໂຮງຮຽນຄົນຫູໜວກ
- ສູນດໍາລົງຊີວິດເອກະລາດ PARI
- ໂຄງການ AIDS RI
- ການຮ່ວມມື RI ຕອນເໜືອ
- ບ້ານແຫ່ງຄວາມຫວັງ
- ສູນການໄດ້ຍິນສຽງ ແລະການປາກເວົ້າໂຮ່ງໝໍ RI
- ສູນລັດແຫ່ງມະຫາສະໝຸດສໍາລັບການດໍາລົງຊີວິດເອກະລາດ (OSCIL)
- ສຸຂະພາບຈິດຣິເວີວູດ
- ສູນເຄັນທ໌
- ດູແລສຸຂະພາບເກດເວ

**ເອກະສານຫຼັກຖານຢັ້ງຢືນປະຈໍາຕົວ**

ຈໍາເປັນຕ້ອງມີບັດປະຈໍາຕົວທີ່ມີຮູບຖ່າຍເຊັ່ນ: ໃບຂັບຂີ່, ບັດປະຈໍາຕົວຂອງລັດ, ໜັງສືເດີນທາງ, ຫຼືບັດນັກສຶກສາ. ຖ້າບຸກຄົນໃດໜຶ່ງບໍ່ມີບັດປະຈໍາຕົວທີ່ມີຮູບ ສະແດງ, ພໍ່ແມ່, ຜູ້ປົກຄອງ, ສະມາຊິກຄອບຄົວ, ຜູ້ຈັດການຄະດີ ຫຼືພະນັກງານອົງການກ່ຽວຂ້ອງອື່ນໆອາດຈະສະແດງບັດປະຈໍາຕົວທີ່ມີຮູບຖ່າຍຂອງເຂົາເຈົ້າ ແລະຄໍ້າປະກັນໃຫ້ບຸກຄົນນັ້ນ.

**ເອກະສານຫຼັກຖານດ້ານລາຍໄດ້**

ເອກະສານຫຼັກຖານຢັ້ງຢືນອາຍຸ ຫຼືຄວາມພິການໃຫ້ສິດບຸກຄົນໄດ້ຮັບບັດຜ່ານຂຶ້ນລົດເມເຄິ່ງຄ່າ. ເພື່ອໃຫ້ມີສິດໄດ້ຮັບບັດຜ່ານຂຶ້ນລົດເມບໍ່ເສຍຄ່າ, ຈະຕ້ອງມີເງື່ອນໄຂຕາມບົດແນະນໍາດ້ານລາຍໄດ້ສະເພາະ. ພໍ່ແມ່ ຫຼືຜູ້ປົກຄອງເດັກອາຍຸຕໍ່າກວ່າ 18 ປີ ຕ້ອງມີເງື່ອນໄຂຕາມບົດແນະນໍາດ້ານລາຍໄດ້ ເພື່ອຈະໄດ້ຮັບບັດຜ່ານບໍ່ເສຍຄ່າອອກໃຫ້ແກ່ເດັກ.

**ບົດແນະນໍາລາຍໄດ້ປີ 2012**

ເງື່ອນໄຂກໍານົດລາຍໄດ້ແມ່ນກໍານົດຢູ່ທີ່ 200% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ.

**ໜຶ່ງ**ໃນເອກະສານຫຼັກຖານດ້ານລາຍໄດ້ຕ້ອງນໍາມາໃຊ້ພິສູດລາຍໄດ້.

- ບັດຊ່ວຍເຫຼືອການປິ່ນປົວ (Medicaid Card)
- ໜັງສືໃຫ້ການຮັບຮອງການປະກັນສັງຄົມປະຈຸບັນ
- ໜັງສືໃຫ້ການຮັບຮອງການຄຸ້ມຄອງນັກຮົບເກົ່າປະຈຸບັນ
- ສໍາເນົາໃບເຊັກເງິນປະຈຸບັນ, ແລະ/ຫຼືບັນຊີສໍາຮອງທະນາຄານ, ແລະ/ຫຼືບົດລາຍງານເງິນອຸດໜູນ
- ສໍາເນົາບັນທຶກບັນຊີພາສີ ສາມາດເອົາໄດ້ຈາກ IRS ເປັນເອກະສານຫຼັກຖານດ້ານລາຍໄດ້. ຖ້າບຸກຄົນບໍ່ມີລາຍໄດ້, ຈໍາເປັນຕ້ອງມີສໍາເນົາບັນທຶກບັນຊີພາສີ.

**ການເອົາສໍາເນົາບັນທຶກບັນຊີພາສີຈາກ IRS** *(ຈາກ irs.gov)*

| ທ່ານຕ້ອງການເອກະສານໃດແດ່? | ເກັບກໍາຂໍ້ມູນຂອງທ່ານ | ເອົາສໍາເນົາບັນທຶກຂອງທ່ານ |
|---|---|---|
| **ສໍາເນົາບັນທຶກບັນຊີພາສີ**ຟຣີໃຫ້ຂໍ້ມູນພື້ນຖານ, ລວມທັງສະຖານະການແຕ່ງງານ, ປະເພດຂອງຜົນຕອບແທນທີ່ຍື່ນ, ລາຍໄດ້ລວມທີ່ປັບປຸງແລ້ວ, ແລະລາຍໄດ້ຕ້ອງເສຍພາສີ. | 1. ໝາຍເລກປະກັນສັງຄົມ<br>2. ວັນເດືອນປີເກີດ<br>3. ທີ່ຢູ່ຖະໜົນ<br>4. ລະຫັດໄປສະນີ | ໄປທີ່ www.irs.gov ຫຼື<br>ໂທຫາ 1-800-908-9946 ຫຼື<br>ໄປທີ່ຫ້ອງການ IRS |

**ທີ່ຕັ້ງຫ້ອງການ IRS**

| ເມືອງ | ທີ່ຢູ່ຖະໜົນ | ວັນ/ຊົ່ວໂມງເຮັດວຽກບໍລິການ | ໂທລະສັບ |
|---|---|---|---|
| **Providence** | 380 Westminster St. | ຈັນ-ສຸກ: 8:30 ໂມງເຊົ້າ - 4:30 ໂມງແລງ | (401) 525-4282 |
| **Warwick** | 60 Quaker Lane | ຈັນ-ສຸກ: 8:30 ໂມງເຊົ້າ - 4:30 ໂມງແລງ | (401) 826-4797 |

ນະໂຍບາຍຄ່າໂດຍສານ

ບຸກຄົນໃດໜຶ່ງທີ່ຖືບັດບໍ່ເສຍຄ່າໂດຍສານສາມາດຂີ່ລົດໃນທຸກການບໍລິການຕາມສາຍທາງກໍານົດທັງໝົດໄດ້ຟຣີ. ບຸກຄົນໃດໜຶ່ງທີ່ຖືບັດເສຍຄ່າໂດຍສານລາຄາຜ່ອນຈໍາເປັນຕ້ອງຈ່າຍຄ່າໂດຍສານເຄິ່ງໜຶ່ງໃນລະຫວ່າງຊົ່ວໂມງທີ່ບໍ່ມີຄົນຫຼາຍ ແລະເສຍຄ່າໂດຍສານເຕັມໃນຊົ່ວໂມງມີຄົນຫຼາຍໃນທຸກການບໍລິການຕາມສາຍທາງກໍານົດທັງໝົດໄດ້ຟຣີ.

**ຊົ່ວໂມງມີຄົນຫຼາຍ:**

7 ໂມງເຊົ້າ ຫາ 9 ໂມງເຊົ້າ ແລະ 3 ໂມງແລງ ຫາ 6:00 ໂມງແລງໃນວັນທໍາມະດາ.

**ຊົ່ວໂມງມີຄົນບໍ່ຫຼາຍ:**

ກ່ອນ 7 ໂມງເຊົ້າ, ລະຫວ່າງ 9 ໂມງເຊົ້າ - 3 ໂມງແລງ, ແລະຫຼັງຈາກ 6 ໂມງແລງໃນວັນທໍາມະດາ; ຕະຫຼອດວັນໃນວັນທ້າຍອາທິດ ແລະວັນພັກ. ບັດຜ່ານຂຶ້ນລົດເມຈະຊີ້ບອກວ່າ ຜູ້ໂດຍສານໄດ້ຮັບອະນຸມັດໃຫ້ຜູ້ຊ່ວຍດູແລສ່ວນຕົວ (PCA) ໄປນໍາບໍ. ບັນດາ PCA ຂີ່ຟຣີ. ແຂກຜູ້ອື່ນ ຫຼືຜູ້ໄປນໍາຕ້ອງຈ່າຍຄ່າໂດຍສານປົກກະຕິ.

**ການເອົາບັດຜ່ານຂຶ້ນລົດເມ**

**ບ່ອນທີ່ຈະໄດ້ຮັບການອະນຸມັດສຳລັບໂຄງການບັດຜ່ານຂຶ້ນລົດເມ:**

1. ຫ້ອງການ RIPTA ID ຕັ້ງຢູ່ທີ່ 1 Kennedy Plaza in Downtown Providence. ຫ້ອງການເປີດແຕ່ວັນຈັນຫາວັນພະຫັດ ຕັ້ງແຕ່ 9:00 ໂມງເຊົ້າ – 12:00 ໂມງແລງ ແລະ 1:00 ໂມງແລງ – 4:00 ໂມງແລງ. ຫ້ອງການປິດໃນວັນພັກ

2. ໜ່ວຍງານ RIPTA Mobile ຈະໄປຢ້ຽມຢາມສະຖານທີ່ຕ່າງໆຢູ່ນອກ Providence ໃນວັນສຸກ. ເບິ່ງເວັບໄຊທ໌ຂອງ RIPTA ຢູ່ທີ່ www.ripta.com ຫຼືໂທຫາເບີ 784-9500 x604 ສຳລັບສະຖານທີ່ຕ່າງໆ.

**ຄ່າທຳນຽມ:** ຄ່າບັດຜ່ານຂຶ້ນລົດເມແມ່ນ $25.00.

**ວັນທີໝົດອາຍຸ:** ບັດຜ່ານໃຊ້ໄດ້ເປັນເວລາ 5 ປີ ນັບຈາກມື້ອອກໃຫ້.

**ການປ່ຽນບັດຜ່ານຂຶ້ນລົດເມ:**

- ບັດຜ່ານຂຶ້ນລົດເມທີ່ໃຊ້ການບໍ່ໄດ້ຕ້ອງສົ່ງຄືນ ເພື່ອຮັບເອົາບັດຜ່ານຂຶ້ນລົດເມອັນໃໝ່ປ່ຽນແທນ.
- ໃນກໍລະນີທີ່ບັດຜ່ານຂຶ້ນລົດເມເສຍ ຫຼືຖືກລັກ, ການອອກບັດໃໝ່ປ່ຽນແທນໃຫ້ແມ່ນຈະອອກຕາມການແຈ້ງຫາ RIPTA.
- ການອອກບັດຜ່ານຂຶ້ນລົດເມປ່ຽນແທນແມ່ນຈະເສຍຄ່າທຳນຽມ.
    - $10.00 ສຳລັບການປ່ຽນເທື່ອທຳອິດ
    - $15.00 ສຳລັບການປ່ຽນເທື່ອທີສອງ
    - $20.00 ສຳລັບການປ່ຽນເທື່ອທີສາມ

**ການຕໍ່ບັດຜ່ານຂຶ້ນລົດເມໃໝ່:**

- ຈະມີການເກັບຄ່າທຳນຽມການຕໍ່ບັດຜ່ານຂຶ້ນລົດເມໃໝ່.
- ຜູ້ອາວຸໂສສາມາດຕໍ່ບັດຜ່ານຂຶ້ນລົດເມຂອງເຂົາເຈົ້າໃໝ່ໄດ້ໂດຍການນຳເອົາບັດຜ່ານທີ່ຈະໝົດອາຍຸ ຫຼືເອກະສານຫຼັກຖານລາຍໄດ້ໄປນຳ.
- ຄົນຜູ້ພິການຈະຕ້ອງໃຫ້ໃບຢັ້ງຢືນຄວາມພິການ ແລະລາຍໄດ້ໃໝ່.

**ບັດຜ່ານຂຶ້ນລົດເມທີ່ສົ່ງຄືນແລ້ວ:**

ບັດຜ່ານຂຶ້ນລົດເມທີ່ຖືກຍຶດ ຫຼືຖືກຮຽກເອົາຄືນ ແລະໄດ້ສົ່ງຄືນຫຼັງການສືບສວນແມ່ນຈະຕ້ອງເສຍຄ່າທຳນຽມການດຳເນີນການ $5.00. RIPTA ອາດຈະຕັດສິນໃຈສະຫຼະຄ່າທຳນຽມນີ້ເປັນໄປຕາມແຕ່ລະກໍລະນີ ຂຶ້ນກັບສະພາບການ.

**ການໃຊ້ບັດຜ່ານຂຶ້ນລົດເມ RIPTA**

ບັດຜ່ານຂຶ້ນລົດເມ RIPTA ສາມາດໃຊ້ຢູ່ໃນເສັ້ນທາງກຳນົດໄວ້ປົກກະຕິຂອງ RIPTA ແລະການບໍລິການ Flex. ຈະຕ້ອງສະແດງບັດຜ່ານຂຶ້ນລົດເມ ເມື່ອຂຶ້ນລົດເມ. ບັດເປັນບັດໃນແບບອີເລັກໂທຣນິກ ແລະຕ້ອງລົງທະບຽນຢູ່ໃນກ່ອງຄ່າທຳນຽມ ເພື່ອໃຫ້ໄດ້ຮັບການຍອມຮັບ. ຜູ້ຂັບຂີ່ມີສິດຢືນຢັນບັດທີ່ມີຮູບວ່ານັ້ນເປັນຂອງຜູ້ໃຊ້. ບັດຜ່ານຂຶ້ນລົດເມຕ້ອງໄດ້ຮັບສາໄວ້ໃນການຄອບຄອງຂອງຜູ້ມີສິດໄດ້ຮັບຕະຫຼອດເວລາ ໃນຂະນະທີ່ກຳລັງໃຊ້ການບໍລິການ RIPTA.

**ການໃຊ້ບັດຜ່ານຂຶ້ນລົດເມ RIPTA ທີ່ບໍ່ເໝາະສົມ**

RIPTA ສະຫງວນສິດທີ່ຈະຍຶດ ຫຼືຮຽກເກັບບັດຜ່ານຂຶ້ນລົດເມໃດໜຶ່ງທີ່ມີການນຳໃຊ້ບໍ່ເໝາະສົມ. ການນຳໃຊ້ທີ່ບໍ່ເໝາະສົມປະກອບດ້ວຍ:

- ການໃຊ້ບັດຜ່ານໝົດອາຍຸແລ້ວ
- ການໃຊ້ບັດຜ່ານຂອງຜູ້ອື່ນ
- ການເຮັດໃຫ້ບັດຜ່ານມີຮອຍຕຳນິ
- ການໃຊ້ບັດຜ່ານຮ່ວມກັນ ຫຼືການຂາຍບັດຜ່ານ
- ການໄດ້ຮັບບັດຜ່ານມາບໍ່ເໝາະສົມ - ຖ້າພົບວ່າໃບຄຳຮ້ອງເປັນໃບຄຳຮ້ອງປອມຫຼັງຈາກອອກບັດຜ່ານໃຫ້ແລ້ວ, ຈະມີການຮຽກເກັບບັດຜ່ານຄືນ.

ບັດຜ່ານທີ່ຖືກຍຶດ ຫຼືຮຽກເອົາກັບຄືນແມ່ນຈະບໍ່ມີການສົ່ງຄືນ ຫຼືປ່ຽນແທນໃຫ້ເປັນເວລາໜຶ່ງປີ. ຫຼັງຈາກໄລຍະເວລາໜຶ່ງປີໄປແລ້ວ, ບຸກຄົນນັ້ນອາດຈະຕ້ອງສະໝັກຂໍໂຄງການບັດຜ່ານຂຶ້ນລົດເມອີກໃໝ່.

ລູກຄ້າຜູ້ທີ່ຖືກຍຶດບັດຜ່ານເພາະວ່າມີການໃຊ້ບັດຜ່ານໝົດອາຍຸໂດຍບໍ່ເຈດຕະນາອາດຈະຕໍ່ໃໝ່ໃຫ້ໄດ້ທັນທີ.

ຜູ້ໂດຍສານຄົນໃດກໍ່ຕາມທີ່ຖືກຍຶດບັດຜ່ານ ຫຼືຖືກຮຽກເອົາກັບຄືນຕ້ອງຈ່າຍຄ່າຕາມປົກກະຕິໃນການອອກບັດຜ່ານໃໝ່ ຫຼືປ່ຽນແທນບັດຜ່ານໃຫ້. ບັດຜ່ານທີ່ຖືກສົ່ງຄືນຫຼັງຈາກໄດ້ມີການແກ້ໄຂການນຳໃຊ້ບໍ່ເໝາະສົມແມ່ນຈະຕ້ອງໄດ້ຈ່າຍຄ່າທຳນຽມການດຳເນີນການຕາມຕາຕະລາງການຊຳລະຂອງ RIPTA ສຳລັບບັດຜ່ານຂຶ້ນລົດເມ.

**ຄຳອຸທອນ**

ຄົນໜຶ່ງອາດຈະເລືອກຍື່ນຄຳອຸທອນໄດ້ ຖ້າໃບຄຳຮ້ອງຂອງເຂົາເຈົ້າຖືກປະຕິເສດ ຫຼືບັດຜ່ານຂອງເຂົາເຈົ້າຖືກຍຶດ, ຖືກຖອນຄືນ, ຫຼືຖືກຮຽກຄືນ. ສາມາດໃຫ້ຂໍ້ມູນເພີ່ມເຕີມ ຫຼືເຫດຂັດຂ້ອງໃດໜຶ່ງເປັນສ່ວນຂອງການອຸທອນໄດ້. ຈະຕ້ອງສົ່ງຄຳອຸທອນເປັນລາຍລັກອັກສອນ, ແລະສົ່ງເຖິງ:

RIPTA
Customer Service Manager (ຜູ້ຈັດການບໍລິການລູກຄ້າ)
Bus Pass Program (ໂຄງການບັດຜ່ານຂຶ້ນລົດເມ)
705 Elmwood Avenue
Providence, RI 02907

ຜູ້ຈັດການບໍລິການລູກຄ້າຈະກວດຄືນທຸກເອກະສານກ່ຽວຂ້ອງ, ສືບສວນເລື່ອງ, ປຶກສາກັບຝ່າຍອື່ນຕາມທີ່ຈຳເປັນ, ແລະໃຫ້ການຕັດສິນພາຍໃນສິບຫ້າ (15) ວັນເຮັດວຽກຫຼັງຈາກໄດ້ຮັບໜັງສືອຸທອນ.

**ຄຳຖາມ**

ຫາກມີຄຳຖາມ ຫຼືຂໍ້ຂ້ອງໃຈໃດໜຶ່ງກ່ຽວກັບໂຄງການບັດຜ່ານຂຶ້ນລົດເມຂອງ RIPTA ສຳລັບຜູ້ອາວຸໂສ ແລະຄົນພິການແມ່ນສາມາດສົ່ງໄປຫາຜູ້ຈັດການສູນບໍລິການລູກຄ້າ RIPTA ໂດຍກົງໄດ້ທີ່ເບີ (401) 784-9500 ຕໍ່. 183 ຫຼືສົ່ງເຖິງຜູ້ຊ່ວຍຜູ້ຈັດການໃຫຍ່ ສຳລັບການພົວພັນລູກຄ້າທີ່ເບີ (401) 784-9500 ຕໍ່. 140.